ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ເລກທີ: 17 /ສພທ.ທຄຕລ
ນະຄອນຫຼວງວຽງຈັນ, ວັນທີ: 31/08/2021

# ມະຕິ
## ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
## ວັນທີ 31/08/2021

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 3 ປະຈຳປີ 2021 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ວັນທີ 31/08/2021 ທີ່ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມ.

**ກອງປະຊຸມໄດ້ປຶກສາຫາລື ແລະ ມີມະຕິຕົກລົງບາງບັນຫາສຳຄັນ ດັ່ງນີ້:**

1. ຮັບຮອງການຈັດກຸ່ມຄວາມສ່ຽງຂອງລູກຄ້າສິນເຊື່ອ ທຄຕລ ແລະ ວິທີການແກ້ໄຂສຳລັບລູກຄ້າແຕ່ລະກຸ່ມ;
2. ຮັບຮອງການປັບປຸງອັດຕາດອກເບ້ຍຂອງລູກຄ້າເງິນກູ້ 1 ລາຍ ແລະ ອະນຸມັດການປ່ອຍກູ້ໃໝ່ 1 ລາຍ;
3. ຮັບຮອງເອກະສານລາຍງານການເງິນ ທຄຕລ ປະຈຳ 06 ເດືອນຕົ້ນປີ 2021 ທີ່ໄດ້ຮັບການທົບທວນຈາກຜູ້ກວດສອບພາຍນອກ;
4. ຮັບຮອງການແຕ່ງຕັ້ງສະພາບໍລິຫານ ທຄຕລ ຊຸດໃໝ່ ແລະ ຄະນະກຳມະການສະພາບໍລິຫານ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນຮັບຮອງ;
5. ຮັບຮອງການດັດແກ້ແຜນທຸລະກິດ ປະຈຳປີ 2021 ຂອງ ທຄຕລ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນຮັບຮອງ;
6. ເຫັນດີໃຫ້ ທຄຕລ ຂຶ້ນແຜນການຈັດກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ ເພື່ອຮັບຮອງເອົາສະພາບໍລິຫານຊຸດໃໝ່ ແລະ ບັນຫາສຳຄັນອື່ນໆ

**ປະທານສະພາບໍລິຫານ**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ບຸນເຫຼືອ ສິນໄຊວໍຣະວົງ